ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງຍຸຕິທຳ

ເລກທີ 800/ກຍ

ນະຄອນຫລວງວຽງຈັນ, ວັນທີ 02 SEP 2016

# ຄຳແນະນຳ

## ຂອງລັດຖະມົນຕີກະຊວງຍຸຕິທຳ

ເຖິງ: ທ່ານ ຫົວໜ້າກົມທະບຽນສານ ແລະ ຫົວໜ້າພະແນກຍຸຕິທຳນະຄອນຫຼວງ, ບັນດາແຂວງ ໃນທົ່ວປະເທດ

ເລື່ອງ: ການຈັດຕັ້ງຜັນຂະຫຍາຍຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 1 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ່ 404/ນຍ, ລົງວັນທີ 23 ພະຈິກ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຍຸຕິທຳ;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ່ 10/ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ;

ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງນາຍົກລັດຖະມົນຕີ ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປົກປ້ອງຄວາມຍຸຕິທຳ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ.

## ລັດຖະມົນຕີກະຊວງຍຸຕິທຳ ອອກຄຳແນະນຳ

1. ໃຫ້ພະແນກຍຸຕິທຳນະຄອນຫຼວງ, ບັນດາແຂວງ ເອົາໃຈໃສ່ຄົ້ນຄວ້າ, ກຳແໜ້ນ ແລະ ຈັດຕັ້ງເຜີຍແຜ່, ເຊື່ອມຊຶມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ ໃຫ້ພະນັກງານ, ລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລ້ວຫັນເປັນແຜນງານ, ໂຄງການວຽກງານຕົວຈິງ. ໃນນີ້, ໃຫ້ຄົ້ນຄວ້າຫັນເປັນນິຕິກຳຂອງເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ພ້ອມທັງຍາດແຍ່ງຂໍທຶດຊີ້ນຳ, ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ເຊັ່ນ ງົບປະມານ, ອຸປະກອນຮັບໃຊ້ທີ່ຈຳເປັນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

2. ໃຫ້ພະແນກຍຸຕິທຳ ຊີ້ນຳຫ້ອງການທະບຽນສານ ສົມທົບກັບຫ້ອງການກົດໝາຍ ແລະ ໂຄສະນາເຜີຍແຜ່ກົດໝາຍ ສ້າງແຜນຈັດຕັ້ງການໂຄສະນາເຜີຍແຜ່, ສຶກສາອົບຮົມ ກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳອື່ນກ່ຽວກັບວຽກງານທະບຽນສານ ດ້ວຍຫຼາຍຮູບການ ນັບທັງທາງກວ້າງ ແລະ ທາງເລິກ ໃຫ້ບັນດາຂະແໜງການ, ອົງການ ທັງພາກລັດ ແລະ ເອກະຊົນ, ພົນລະເມືອງທຸກຄົນ ຮັບຮູ້ເຂົ້າໃຈເຖິງ

ຄວາມໝາຍ, ຄວາມສຳຄັນ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນໂດຍອົງການທະບຽນສານ. ສຳລັບເນື້ອໃນການໂຄສະນາ ແມ່ນອີງໃສ່ຄູ່ມືໂຄສະນາວຽກງານທະບຽນສານ ແລະ ສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ເປັນບ່ອນອີງ.

3. ໃຫ້ພະແນກຍຸຕິທຳນະຄອນຫຼວງ, ບັນດາແຂວງ ເພີ່ມທະວີຄວາມເອົາໃຈໃສ່ໃນການປັບປຸງກົງຈັກການຈັດຕັ້ງຂອງຫ້ອງການທະບຽນສານຂັ້ນຂອງຕົນ, ສົມທົບກັບຄະນະພັກ, ອົງການປົກຄອງເມືອງ ເພື່ອສ້າງຕັ້ງ ແລະ ປັບປຸງໜ່ວຍງານທະບຽນສານ. ໃນນີ້, ເມືອງທີ່ຍັງບໍ່ທັນໄດ້ຮັບການສ້າງຕັ້ງ ກໍໃຫ້ຄົ້ນຄວ້າສະເໜີການສ້າງຕັ້ງໃຫ້ຄົບຖ້ວນ, ສ່ວນເມືອງທີ່ໄດ້ສ້າງຕັ້ງແລ້ວ ກໍໃຫ້ກວດກາ, ປັບປຸງຄືນໃໝ່ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ. ຄາດໝາຍສູ້ຊົນໃນການສ້າງຕັ້ງໜ່ວຍງານທະບຽນສານ ໃຫ້ບັນລຸ 60-70% ຂຶ້ນໄປຕໍ່ປີ ຂອງຈຳນວນເມືອງໃນທົ່ວແຂວງ ແລະ ສ້າງໃຫ້ມີຄົບທຸກເມືອງໃນປີ 2020.

ໄປພ້ອມໆກັບການປັບປຸງກົງຈັກການຈັດຕັ້ງ ກໍໃຫ້ເອົາໃຈໃສ່ຄົ້ນຄວ້າ, ເລືອກເຟັ້ນບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດບັນຈຸໃສ່ຫ້ອງການທະບຽນສານໃຫ້ຄົບຖ້ວນຕາມການກຳນົດຕຳແໜ່ງງານ. ໃນນີ້, ຄາດໝາຍສູ້ຊົນແມ່ນ ຫ້ອງການທະບຽນສານນະຄອນຫຼວງ, ບັນດາແຂວງ ໃຫ້ມີພະນັກງານຢ່າງໜ້ອຍ 4 ຄົນຂຶ້ນໄປ, ຢູ່ຂັ້ນເມືອງ ໃຫ້ມີ 2 ຄົນຂຶ້ນໄປຕໍ່ເມືອງ ແລະ ຕ້ອງມີນັກກົດໝາຍ ເປັນຫົວໜ້າ ຫຼື ຮອງຫົວໜ້າຫ້ອງການ, ໜ່ວຍງານທະບຽນສານ ເພື່ອສາມາດປະຕິບັດພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນສານ ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງອົງການທະບຽນສານ.

4. ການສ້າງຕັ້ງໜ່ວຍງານທະບຽນສານ ແລະ ການແຕ່ງຕັ້ງຫົວໜ້າ ຫຼື ຮອງຫົວໜ້າໜ່ວຍງານທະບຽນສານ ໃຫ້ປະຕິບັດຕາມຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 225 /ກຍ, ລົງວັນທີ 26 ມີນາ 2014 ວ່າດ້ວຍການສ້າງຕັ້ງ, ການຍຸບເລີກຫ້ອງການ ແລະ ໜ່ວຍງານທະບຽນສານ, ການແຕ່ງຕັ້ງ, ການຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ໜ່ວຍງານທະບຽນສານ ສຳລັບແຂວງ ແລະ ບັນດາເມືອງທົດລອງ 3 ສ້າງ.

5. ໃຫ້ພະແນກຍຸຕິທຳ, ຫ້ອງການຍຸຕິທຳ ຊີ້ນຳອົງການທະບຽນສານຂັ້ນຂອງຕົນ ເກັບຄ່າທຳນຽມ ແລະ ຄ່າບໍລິການໃນການຢັ້ງຢືນສັນຍາ ແລະ ເອກະສານອື່ນ ຕາມອັດຕາທີ່ໄດ້ກຳນົດໃນຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 873/ກຍ, ລົງວັນທີ 10 ຕຸລາ 2014 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ. ການເກັບຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງນຳໃຊ້ໃບຮັບເງິນຂອງຂະແໜງການເງິນ, ປະສານສົມທົບກັບຂະແໜງການເງິນຂັ້ນຂອງຕົນ ກ່ຽວກັບການຄຸ້ມຄອງ, ການສະຫຼຸບມອບໃຫ້ຂະແໜງການດັ່ງກ່າວ ໃຫ້ທັນເວລາ ແລະ ຖືກຕ້ອງຕາມລະບຽບການ.

6. ໃຫ້ກົມທະບຽນສານ ຮີບຮ້ອນສືບຕໍ່ຂຽນຕຳລາຝຶກອົບຮົມວຽກງານທະບຽນສານ ແລ້ວສົມທົບກັບສະຖາບັນຍຸຕິທຳແຫ່ງຊາດ ເພື່ອຈັດຕັ້ງດຳເນີນການຝຶກອົບຮົມພະນັກງານທະບຽນສານ ໃຫ້ສາມາດເປີດໄດ້ໃນຕົ້ນປີ 2017 ໄດ້ຢ່າງໜ້ອຍ 01 ຊຸດ, ມີຜູ້ເຂົ້າຮ່ວມຢ່າງໜ້ອຍ 50 ຄົນຂຶ້ນໄປ.

ໃຫ້ພະແນກຍຸຕິທຳນະຄອນຫຼວງ, ບັນດາແຂວງ ກະກຽມບຸກຄະລາກອນໃນຂັ້ນຂອງຕົນ ພ້ອມທັງຊີ້ນຳຫ້ອງການຍຸຕິທຳເມືອງ ເລືອກເຟັ້ນບຸກຄະລາກອນຢູ່ເມືອງທີ່ໄດ້ຮັບສ້າງຕັ້ງໜ່ວຍງານທະບຽນສານແລ້ວ ຫຼື ເມືອງທີ່ມີແຜນສ້າງຕັ້ງໜ່ວຍງານທະບຽນສານ ເພື່ອເຂົ້າຝຶກອົບຮົມວຽກງານທະບຽນສານໃນຕົ້ນປີ 2017 ນີ້ ໃຫ້ທັນຕາມກຳນົດເວລາ.

7. ມອບໃຫ້ຫ້ອງການກົມທະບຽນສານ ແລະ ຫົວໜ້າພະແນກຍຸຕິທຳນະຄອນຫຼວງ, ບັນດາແຂວງ ເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

8. ໃນການຈັດຕັ້ງປະຕິບັດຕົວຈິງ, ຖ້າຫາກພົບຄວາມຫຍຸ້ງຍາກປະການໃດ ກໍໃຫ້ລາຍງານຂໍຄວາມເຫັນຈາກຄະນະນຳກະຊວງ ໂດຍຜ່ານກົມທະບຽນສານ ໃຫ້ເປັນປົກກະຕິ, ຫຼີກເວັ້ນແນວຄິດເອື່ອຍອີງ ລໍຖ້າແຕ່ການຊີ້ນຳຈາກຂັ້ນເທິງ.

ດັ່ງນັ້ນ, ຈຶ່ງແນະນຳມາຍັງແຕ່ລະພາກສ່ວນເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

ລັດຖະມົນຕີ,

ໄຊສີ ສັນຕິວົງ